DECENT WORK
A better world starts here.

International Labour Organization

# ຖານການປົກປ້ອງສັງຄົມແຫ່ງຊາດໃນພາກພື້ນອາຊີ ແລະ ປາຊີຟິກ

## ການລົງທຶນເພື່ອພັດທະນາຊັບພະຍາກອນມະນຸດ ແລະ ການສົ່ງເສີມເສດຖະກິດໃຫ້ຂະຫຍາຍຕົວ

### ບຸລິມະສິດຂອງຫລາຍ ໆ ປະເທດໃນພາກພື້ນ

ໃນຂະນະທີ່ພາກພື້ນອາຊີ ແລະ ປາຊີຟິກເປັນຂົງເຂດໜຶ່ງທີ່ມີເສດຖະກິດຂະຫຍາຍຕົວຢ່າງພົ້ນເດັ່ນໃນໄລຍະສອງທົດສະວັດທີ່ຜ່ານມາ ແລະ ຊ່ວຍໃຫ້ປະຊາຊົນຫລາຍລ້ານຄົນຫລຸດພົ້ນອອກຈາກຄວາມທຸກຍາກ, ແຕ່ກໍ່ຍັງບໍ່ສາມາດຊ່ວຍໃຫ້ທຸກໆຄົນໄດ້ຮັບຜົນປະໂຫຍດຈາກການເຕີບໂຕດັ່ງກ່າວ. ຍັງມີປະຊາຊົນທີ່ທຸກຍາກອີກຫລາຍລ້ານຄົນທັງຂາດການຊ່ວຍເຫລືອຈາກສັງຄົມ, ແລະ ມີຄວາມສ່ຽງສູງຈາກຜົນກະທົບທາງເສດຖະກິດ ແລະ ສະພາບການປ່ຽນແປງຂອງອາກາດ. ສະພາບການດັ່ງກ່າວນີ້ໄດ້ກາຍເປັນໄພຂົ່ມຂູ່ຕໍ່ການພັດທະນາຊັບພະ ຍາກອນມະນຸດໃນຊຸມປີທີ່ຜ່ານມາ.

ຕໍ່ບັນຫາດັ່ງກ່າວ, ຫລາຍໆປະເທດ ລວມມີ ກຳປູເຈຍ, ຈີນ, ອິນເດຍ, ອິນໂດເນເຊຍ, ສ ປປ ລາວ, ມົງໂກລີ, ເນປານ, ຟີລິບປິນສ໌, ເກາະໂຊໂລມອນ, ສີລັງກາ, ໄທ, ວັງນວາຕູ ແລະ ຫວຽດນາມ ໄດ້ເພີ່ມມາດຕະການເພື່ອຮັບປະກັນໃຫ້ປະຊາຊົນຜູ້ທີ່ບໍ່ໄດ້ຮັບການຄຸ້ມຄອງໃນລະບົບປະກັນສັງຄົມໃຫ້ສາມາດເຂົ້າເຖິງການຮັກສາສຸຂະພາບຂັ້ນພື້ນຖານ, ມີລາຍຮັບ, ເຂົ້າໂຮງຮຽນໂດຍບໍ່ເສຍຄ່າທຳນຽມ ແລະ ຮັບປະກັນມີອາຫານພຽງພໍ. ນະໂຍບາຍດັ່ງກ່າວນີ້ເປັນພາກສ່ວນໜຶ່ງຂອງຖານການປົກປ້ອງສັງຄົມ (SPF). ບາງກໍລະນີ, ລະບົບປະກັນສັງຄົມມີລັກສະນະທົ່ວໄປ ເຊັ່ນ: ລະບົບປະກັນສຸຂະພາບແບບທົ່ວໄປໃນປະເທດໄທ. ກໍລະນີອື່ນໆ, ລະບົບປະກັນສັງຄົມມີເປົ້າໝາຍສະເພາະສຳລັບຜູ້ທຸກຍາກເຊັ່ນ: ແຜນງານລົບລ້າງຄວາມທຸກຍາກໃນອິນໂດເນເຊຍ ທີ່ປະຊາຊົນສາມາດເຂົ້າເຖິງການຮັກສາສຸຂະພາບ, ໄດ້ຮັບເງິນອຸດໜູນສຳລັບເດັກນ້ອຍ, ນອກຈາກນີ້ປະຊາຊົນຍັງມີໂອກາດເຮັດວຽກໃນໂຄງການກໍ່ສ້າງຕາມສາທາລະນະ.

ບາງປະເທດ ເຊັ່ນ: ກຳປູເຈຍ, ຖານປົກປ້ອງສັງຄົມຖືກບັນຈຸເຂົ້າແຜນຍຸດທະສາດແຫ່ງຊາດເພື່ອການປົກປ້ອງສັງຄົມ (NSPS). ແຜນຍຸດທະສາດຂອງກຳປູເຈຍນີ້ຖືກຮັບຮອງໃນປີ 2011 ແລະ ໄດ້ລິເລີ່ມຈັດຕັ້ງປະຕິບັດກ່ຽວກັບຖານປົກປ້ອງສັງຄົມແລ້ວ. ໃນຂະນະທີ່ປະເທດມີການພັດທະນາ, ປະຊາຊົນຄວນໄດ້ຮັບໂອກາດມີວຽກເຮັດງານທຳທີ່ໝັ້ນຄົງ, ມີຄຸນຄ່າ ແລະ ເປັນທຳ ທັງໄດ້ຮັບການປົກປ້ອງຈາກສັງຄົມຫລາຍຂຶ້ນ.

ການປະກັນສັງຄົມ(ສຳລັບຜູ້ທີ່ໄດ້ຮັບການຊ່ວຍເຫຼືອ)

- ບຳນານ
- ການປະກັນສຸຂະພາບ
- ຖານການປົກປ້ອງສັງຄົມແຫ່ງຊາດ, ຖານການປົກປ້ອງສັງຄົມແຫ່ງຊາດ - ສຳລັບຜູ້ທີ່ໄດ້ຮັບການຊ່ວຍເຫລືອ
- ການປະກັນສຸຂະພາບໂດຍການມີສ່ວນຮ່ວມຂອງຊຸມຊົນ (ສຸຂະພາບຂອງປະຊາຊົນໄດ້ຮັບການດູແລ)

*2. ການປົກປ້ອງສັງຄົມທີ່ໄດ້ຮັບການເສີມຂະຫຍາຍ*

**ການປົກປ້ອງສັງຄົມເພື່ອຜູ້ທຸກຍາກ ແລະ ຜູ້ທີ່ມີຄວາມສ່ຽງ**

ຕາໜ່າງຄວາມປອດໄພຂອງສັງຄົມ(ສຳລັບຜູ້ທີ່ຂາດການສະໜັບສະໜູນ):

- ປະຊາຊົນມີວຽກເຮັດໃນໂຄງການກໍ່ສ້າງສາທາລະນະ(ອາຫານ ຫລື ເງິນ ເພື່ອວຽກ)
- ມີລາຍຮັບເປັນເງິນສົດ ຫລື ໄດ້ຮັບສິ່ງຕອບແທນອື່ນໆ(ຕາມເງື່ອນໄຂ ຫລື ບໍ່ມີເງື່ອນໄຂ)
- ໄດ້ຮັບການອຸດໜູນຈາກສັງຄົມ(ໄດ້ຮັບນະໂຍບາຍໃນການຮັກສາສຸຂະພາບ, ການສຶກສາ, ການມີທີ່ຢູ່ອາໃສ, ການເຂົ້າເຖິງສາທາລະນະປະໂຫຍດ)

ການບໍລິການດ້ານສະຫວັດດີການສັງຄົມ

*1. ການປົກປ້ອງສັງຄົມຂັ້ນພື້ນຖານ*

### ຖານການປົກປ້ອງສັງຄົມແມ່ນຫຍັງ?

ຖານການປົກປ້ອງສັງຄົມ(SPFs) ຄືແບບແຜນທີ່ຖືກກຳນົດຂຶ້ນໂດຍລັດຖະບານເພື່ອຮັບປະກັນຄວາມໝັ້ນຄົງຂອງສັງຄົມໃນລະດັບພື້ນຖານ. ຖານການປົກປ້ອງສັງຄົມມີຈຸດປະສົງເພື່ອປ້ອງກັນ ຫລື ລົບລ້າງຄວາມທຸກຍາກ, ປົກປ້ອງຜູ້ທີ່ຢູ່ໃນຄວາມສ່ຽງ ແລະ ຜູ້ດ້ອຍໂອກາດໃນສັງຄົມ. ການທີ່ຈະບັນລຸຕາມຈຸດປະສົງ ແລະ ເປົ້າໝາຍຂອງຖານການປົກປ້ອງສັງຄົມ ແມ່ນປະຕິບັດຜ່ານການປະກອບສ່ວນ ແລະ ບໍ່ປະກອບສ່ວນເຂົ້າໃນກອງທຶນປະກັນສັງຄົມບໍ່ວ່າຈະເປັນແບບທົດລອງ ຫລື ປົກຄຸມທົ່ວສັງຄົມ.

ຕົວຢ່າງປະເທດຕ່າງໆໄດ້ຕັ້ງເປົ້າໝາຍຂອງຖານການປົກປ້ອງສັງຄົມຂັ້ນສູນກາງມີຄື:



**ປະຊາຊົນທຸກຄົນ** ຄວນໄດ້ຮັບໂອກາດເຂົ້າເຖິງສິ່ງສາທາລະນະປະໂຫຍດ ແລະ ການບໍລິການຮັກສາສຸຂະພາບທີ່ຈຳເປັນລວມທັງນະໂຍບາຍພາຍຫລັງເກີດລູກ.



**ເດັກນ້ອຍທຸກຄົນ** ຄວນໄດ້ຮັບນະໂຍບາຍຂັ້ນພື້ນຖານທີ່ລັດຖະບານໄດ້ກຳນົດໄວ້ເພື່ອຮັບປະກັນໃຫ້ເຂົາເຈົ້າມີໂພຊະນາການ, ການສຶກສາ, ການຮັກສາສຸຂະພາບ, ເຂົ້າເຖິງສິ່ງສາທາລະນະປະໂຫຍດ ແລະ ການບໍລິການອື່ນໆ.



**ທຸກໆຄົນໃນເກນອາຍຸເຮັດວຽກ** ຜູ້ທີ່ບໍ່ມີລາຍໄດ້ພຽງພໍ (ເຊັ່ນ: ຜູ້ທີ່ບໍ່ສາມາດເຮັດວຽກຍ້ອນວ່າເຈັບເປັນ, ບໍ່ໄດ້ເຮັດວຽກ, ເກີດລູກ ຫລື ພິການ)ຄວນມີປະກັນໄພລາຍຮັບ, ຢ່າງນ້ອຍລັດຖະບານຄວນກຳນົດນະໂຍບາຍຂັ້ນຕ່ຳສຸດໃຫ້ເຂົາເຈົ້າ.



**ທຸກໆຄົນໃນທຸກເກນອາຍຸ** ຄວນມີປະກັນໄພລາຍຮັບ ແລະ ຢ່າງນ້ອຍຄວນກຳນົດນະໂຍບາຍຂັ້ນຕ່ຳສຸດໃຫ້ເຂົາເຈົ້າ.

ມີບັນດາເອກະສານທີ່ເລົ່າເຖິງປະສົບການຂອງຫລາຍໆປະເທດໃນການສ້າງຖານການປົກປ້ອງສັງຄົມແຫ່ງຊາດເຊິ່ງເປັນຂໍ້ມູນໃຫ້ແກ່ຊາວໂລກນຳເອົາໄປຄົ້ນຄວ້າ ເຊັ່ນ: ສິ່ງພິມກ່ຽວກັບ "ຖານການປົກປ້ອງສັງຄົມເພື່ອຄວາມຍຸດຕິທຳ ແລະ ເຮັດໃຫ້ທຸກຄົນໃນສັງຄົມໄດ້ຮັບຜົນປະໂຫຍດຢ່າງແຜ່ຫລາຍ" (ທີ່ຮູ້ກັນດີວ່າເປັນ "ບົດລາຍງານທີ່ດີເລີດ") ຖືກຕີພິມໃນທ້າຍປີ 2011 ໃນ ປະເທດຫວຽດນາມ, ໄທ ແລະ ອິນໂດເນເຊຍ ເຊິ່ງແມ່ນຂໍ້ມູນທີ່ເປັນປະໂຫຍດໃຫ້ແກ່ປະເທດອື່ນໆ ທີ່ກະກຽມການສ້າງຖານການປົກປ້ອງສັງຄົມແຫ່ງຊາດ.

# ຖານການປົກປ້ອງສັງຄົມແຫ່ງຊາດໃນພາກພື້ນອາຊີ ແລະ ປາຊີຟິກ

## ຖານການປົກປ້ອງສັງຄົມກາຍເປັນນະໂຍບາຍອັນສຳຄັນໃນພາກພື້ນ

ໃນຖະແຫລງການໂຄລົມໂບ(ທີ່ນະຄອນໂຄລົມໂບ, ປະເທດສີລັງກາ, ວັນທີ 22 ກຸມພາ 2011) ມີລັດຖະມົນຕີເຈັດທ່ານທີ່ຊີ້ນຳກ່ຽວກັບການພັດທະນາສັງຄົມຈາກອາຊີໃຕ້ໄດ້ຢືນຢັນ ແລະ ໃຫ້ຄຳໝັ້ນສັນຍາ “ຍົກສູງຖານການປົກປ້ອງສັງຄົມເປັນນະໂຍບາຍອັນຕົ້ນຕໍ”.

ກອງປະຊຸມໃຫຍ່ຄັ້ງທີ່ 67 ໃນເດືອນພຶດສະພາ 2011, ເຈົ້າໜ້າທີ່ດ້ານເສດຖະກິດ ແລະ ສັງຄົມ ຂອງລັດສະມາຊິກອົງການສະຫະປະຊາດໃນພາກພື້ນອາຊີ ແລະ ປາຊີຟິກໄດ້ຮັບຮອງເອົາມະຕິວ່າດ້ວຍ “ການສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບປົກປ້ອງສັງຄົມໃນພາກພື້ນອາຊີ ແລະ ປາຊີຟິກ”

ກອງປະຊຸມປະຈຳພາກພື້ນອາຊີ ແລະ ປາຊີຟິກ ຄັ້ງທີ 15, ທີ່ກຸງໂຕກຽວ, ປະເທດຍີ່ປຸ່ນ, ໃນເດືອນທັນວາ ປີ 2011 , ລັດສະມາຊິກຂອງອົງການແຮງງານສາກົນໄດ້ຮັບຮອງຢ່າງເປັນເອກະສັນກັນເພື່ອສົ່ງເສີມ “ຖານການປົກປ້ອງສັງຄົມໃຫ້ມີປະສິດທິພາບ ແລະ ສອດຄ່ອງກັບສະພາບການຂອງແຕ່ລະປະເທດ”.

ກອງປະຊຸມອາຊຽນຮ່ວມກັບອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ຄັ້ງທີ່ 6, ວ່າດ້ວຍວຽກງານສະຫວັດດີການສັງຄົມ ແລະ ການພັດທະນາ, ຈັດຂຶ້ນທີ່ບາງກອກ, ປະເທດໄທ,ໃນເດືອນກັນຍາ ປີ 2011, ແລະ ກອງປະຊຸມສຳມະນາຂອງລະບົບໄຕພາຄີໃນອາຊຽນຈັດຂຶ້ນທີ່ນະຄອນໂຮຈິມິນ, ປະເທດຫວຽດນາມ, ໃນເດືອນມີນາ ປີ 2012 ໄດ້ຮັບຮອງເອົາບົດແນະນຳສອງສະບັບເພື່ອກຳນົດຖານການປົກປ້ອງສັງຄົມແຫ່ງຊາດ.

## ໂອກາດເພື່ອຊຸກຍູ້ໃຫ້ອົງການສະຫະປະຊາຊາດເຮັດວຽກຮ່ວມກັນເປັນອັນໜຶ່ງອັນດຽວ

ອົງການເຄືອຂ່າຍສະຫະປະຊາຊາດໃນຫລາຍໆປະເທດມີການສະໜັບສະໜູນການສ້າງຖານການປົກປ້ອງສັງຄົມແຫ່ງຊາດໂດຍອາໄສການຮ່ວມມື ແລະ ປະສານງານກັນ. ທີມງານຮ່ວມກ່ຽວກັບຖານການປົກປ້ອງສັງຄົມຂອງອົງການສະຫະປະຊາຊາດໃນປະເທດໄທຖືກສ້າງຕັ້ງຂຶ້ນໃນເດືອນມີນາ ປີ 2010 ເປັນໜ່ວຍງານທີ່ປະສົບຄວາມສຳເລັດ ແລະ ເປັນຕົວຢ່າງອັນດີໃນການເຮັດວຽກເປັນອັນໜຶ່ງອັນດຽວກັນເພື່ອສົ່ງເສີມນະໂຍບາຍ ແລະ ຫລັກການກ່ຽວກັບຖານການປົກປ້ອງສັງຄົມ, ທັງສະເໜີຂໍ້ແນະນຳແກ່ລັດຖະບານ, ສະໜັບສະໜູນທາງດ້ານວິຊາການ ແລະ ສ້າງຄວາມເຂັ້ມແຂງກ່ຽວກັບວຽກງານການປົກປ້ອງສັງຄົມ.

ໃນລະດັບພາກພື້ນ, ບົດສະເໜີຫຍໍ້ຂອງໜ່ວຍງານພັດທະນາຂອງອົງການເຄືອຂ່າຍສະຫະປະຊາຊາດກ່ຽວກັບການແກ້ໄຂບັນຫາການປົກປ້ອງສັງຄົມໃນພາກພື້ນອາຊີ ແລະ ປາຊີຟິ ໄດ້ສະເໜີພາລະບົດບາດຂອງອົງການເຄືອຂ່າຍສະຫະປະຊາຊາດໃນການປົກປ້ອງສັງຄົມໃນພາກພື້ນອາຊີ ແລະ ປາຊີຟິກໃນການສະໜັບສະໜູນຊ່ວຍວາງແຜນ ແລະ ຈັດຕັ້ງປະຕິບັດແຜນຍຸດທະສາດແຫ່ງຊາດໃນການປົກປ້ອາສັາຄົມ.

## ບົດແນະນຳກ່ຽວກັບຖານການປົກປ້ອງສັງຄົມແຫ່ງຊາດ: ການແກ້ໄຂບັນຫາທີ່ສຳຄັນ

ເຖິງແມ່ນວ່າໃນໄລຍະມໍ່ໆນີ້, ການຈັດຕັ້ງປະຕິບັດຖານການປົກປ້ອງສັງຄົມມີຄວາມຄືບໜ້າພໍສົມຄວນ, ແຕ່ໃນຫລາຍໆປະເທດໃນພາກພື້ນອາຊີ ແລະ ປາຊີຟິກ, ອົງປະກອບທີ່ເປັນພື້ນຖານທັງສີ່ຂອງຖານການປົກປ້ອງສັງຄົມຍັງບໍ່ທັນຮັບປະກັນໃຫ້ທຸກໆຄົນໄດ້ຮັບຜົນປະໂຫຍດໃນສັງຄົມ. ສະນັ້ນ, ມັນມີຄວາມຈຳເປັນຕ້ອງພັດທະນາວຽກງານປົກປ້ອງສັງຄົມໃຫ້ກ້າວໄປຂ້າງໜ້າ.

ກອງປະຊຸມໃຫຍ່ຄັ້ງທີ 101 ຂອງອົງການແຮງງານສາກົນ, ໃນເດືອນມິຖຸນາ ປີ 2012, ໄດ້ຮັບຮອງເອົາບົດແນະນຳກ່ຽວກັບຖານການປົກປ້ອງສັງຄົມແຫ່ງຊາດ. ບົດແນະນຳດັ່ງກ່າວແມ່ນຄູ່ມືສຳຄັນທີ່ເປັນປະໂຫຍດໃຫ້ແກ່ລັດສະມາຊິກຂອງອົງການແຮງງານສາກົນທີ່ມີຈຸດປະສົງເພື່ອ: (ກ)ສ້າງ ແລະ ປັບປຸງຖານການປົກປ້ອງສັງຄົມໃຫ້ກາຍເປັນອົງປະກອບອັນພື້ນຖານໃຫ້ແກ່ລະບົບປະກັນສັງຄົມແຫ່ງຊາດ; ແລະ (ຂ) ຈັດຕັ້ງປະຕິບັດແຜນຍຸດທະສາດຂອງຖານການປົກປ້ອງສັງຄົມໃນການເສີມຂະຫຍາຍລະບົບປະກັນສັງຄົມໃຫ້ມີຜົນປະໂຫຍດແກ່ຫລາຍໆຄົນ ເທື່ອລະກ້າວເທົ່າທີ່ຈະເປັນໄປໄດ້ ໂດຍສອດຄ່ອງກັບມາດຕະຖານຂອງອົງການແຮງງານສາກົນກ່ຽວກັບການປະກັນສັງຄົມ.

## ການແລກປ່ຽນປະສົບການ - ການມີສ່ວນຮ່ວມ!

ການມີສ່ວນຮ່ວມເພື່ອແລກປ່ຽນປະສົບການກັບອົງການແຮງງານສາກົນກ່ຽວກັບການປະກັນສັງຄົມ, ການປະເມີນຜົນຂອງລັດຖະບານກ່ຽວກັບການປະກັນສັງຄົມ ແລະ ຕຳແໜ່ງງານຫວ່າງ ທີ່ເປັນການສົ່ງເສີມການປະເມີນຜົນໃນປະເທດອິນໂດເນເຊຍ ແລະ ໄທ ສາມາດເຂົ້າໄປທີ່ເວັບໄຊດັ່ງລຸ່ມນີ້!

www.social-protection.org

## ການປະກອບສ່ວນຂອງອົງການແຮງງານາກົນຕໍ່ ABND ໃນທະວີບອາຊີໄດ້ຮັບການສະໜັບສະໜູນຈາກໂຄງການດັ່ງລຸ່ມນີ້:

- ແຜນງານຮ່ວມມືລະຫວ່າງອົງການແຮງງານສາກົນ ແລະ ລັດຖະບານສາທາລະນະລັດເກົາຫລີ;
- ໂຄງການຮ່ວມມືໃຕ້-ໃຕ້
- ລັດຖະບານແຫ່ງປະເທດລຸບແຊມບວກ;
- ໂຄງການຮ່ວມມືລະຫວ່າງອົງການແຮງງານສາກົນ ແລະ ປະເທດແຟັງລັງ.


ຕ້ອງການຂໍ້ມູນເພີ່ມຕື່ມ, ກະລຸນາຕິດຕໍ່ຜູ້ຊ່ຽວຊານລຸ່ມນີ້:

ທ່ານ **Valerie Schmitt**, ຜູ້ຊ່ຽວຊານດ້ານການປະກັນສັງຄົມ, ທີ່ຫ້ອງການອົງການແຮງງານສາກົນເພື່ອການເຮັດວຽກທີ່ມີຄຸນຄ່າ-ເປັນທຳ ປະຈຳບາງກອກ **ໂທລ: +66 22 88 1234**

ທ່ານ **Markus Ruck**, ຜູ້ຊ່ຽວຊານອາວຸໂສດ້ານການປະກັນສັງຄົມ, ທີ່ຫ້ອງການອົງການແຮງງານສາກົນເພື່ອການເຮັດວຽກທີ່ມີຄຸນຄ່າ ລະ ເປັນທຳ ປະຈຳ ເດັນລີ

Email: Bangkok@ilo.org

www.ilo.org/asia